## <u>ບົດຮຽນ 20 - ຂ່າວປະເສີດເລື່ອງລາຊະອານາຈັກ - ພາກທີ 2</u>

ໃນບົດຮຽນທີ 19 ພວກເຮົາໄດ້ຮຽນຮູ້ວ່າ:

1) ຫນັງສືສີ່ເຫຼັ້ມທຳອິດໃນພຣະຄຳພີໃຫມ່ແມ່ນເຊື່ອມຕໍ່ກັນກັບພຣະຄຳພີເດີມຢ່າງໃກ້ຊິດ.

2) ພຣະທຳເຫຼົ່ານີ້ສອນວ່າ ຕ້ອງເຊື່ອຟັງພຣະບັນຍັດຂອງໂມເຊ.

3) ທັດສະນະຂອງພຣະທຳສີ່ເຫຼັ້ມນີ້ຄືລາຊະອານາຈັກເທິງແຜ່ນດິນໂລກ, ບໍ່ແມ່ນຢູ່ໃນສະຫວັນ.

4) ຂໍ້ຄວາມໂດຍພື້ນຖານຂອງຫນັງສືເຫຼົ່ານີ້ຄືອິດສະຣາເອນຕ້ອງກັບໃຈໃຫມ່ ເພາະອານາຈັກສະຫວັນແມ່ນຢູ່ໃກ້ແລ້ວ.

ຕອນນີ້ ພວກເຮົາຈະສືບຕໍ່ສຶກສາພຣະທຳມັດທາຍ, ມາລະໂກ, ລູກາ ແລະ ໂຢຮັນ.

<u>ອິດສະຣາເອນ: ຊົນຊາດທີ່ພຣະເຈົ້າຊົງເລືອກ</u>

ພວກເຮົາໄດ້ພົບກ່ອນຫນ້ານີ້, ໃນການສຶກສາພຣະຄຳພີເດີມຂອງພວກເຮົາວ່າ ພຣະເຈົ້າໄດ້ເລືອກອິດສະຣາເອນເປັນຊົນຊາດຂອງພຣະອົງ. ພວກເຂົາຈະໄດ້ຮັບພຣະພອນເຫນືອຊາດອື່ນໆ. ໃນພຣະທຳມັດທາຍ, ມາລະໂກ, ລູກາ ແລະ ໂຢຮັນ, ຊົນຊາດອິດສະຣາເອນຍັງມີຕຳແໜ່ງພິເສດເໜືອທຸກຊົນຊາດຢູ່ບໍ? ຫຼື ໃນຫນັງສືສີ່ເຫຼັ້ມນີ້, ຄົນຕ່າງຊາດໄດ້ຮັບຕຳແຫນ່ງທີ່ມີຄວາມສະເຫມີພາບກັບຊາວຢິວບໍ?

ໃນພຣະທຳມັດທາຍບົດທີສິບ, ພຣະເຢຊູຄຣິດໄດ້ເອີ້ນອັກຄະສາວົກສິບສອງຄົນ: “ພຣະເຢຊູເຈົ້າໄດ້ໃຊ້ສິບສອງຄົນນີ້ອອກໄປໂດຍໃຫ້ຄຳສັ່ງດັ່ງນີ້: ຢ່າໄປໃນທາງຂອງພວກຕ່າງຊາດ ຫລືຢ່າເຂົ້າໄປໃນເມືອງຂອງຊາວຊາມາເຣຍ ແຕ່ຈົ່ງໄປຫາຝູງແກະທີ່ເສຍແຫ່ງປະຊາຊົນຂອງຊາດອິດສະຣາເອນ” (ມັດທາຍ 10:5-6).

ຮູບ

ທີ່ມາ: https://filedn.com/lD0GfuMvTstXgqaJfpLL87S/sweet_images/jpg/42/42_Lk_07_03_RG.jpg -

ໃຊ້ເພື່ອເປັນຕົວຢ່າງຂອງລູກາ 7:3 ເທົ່ານັ້ນ.

ຈົ່ງສັງເກດວ່າ ພວກອັກຄະສາວົກຖືກບອກບໍ່ໃຫ້ໄປຫາຄົນຕ່າງຊາດ. ພຣະເຢຊູຄຣິດໄດ້ບອກແມ່ຍິງຊາວຊາມາເຣຍວ່າ: "ສິ່ງພວກເຈົ້ານະມັດສະການນັ້ນ ພວກເຈົ້າບໍ່ຮູ້ຈັກ ແຕ່ພວກເຮົາຮູ້ດີວ່າ ພວກເຮົານະມັດສະການຜູ້ໃດ ເພາະຄວາມພົ້ນນັ້ນມາທາງຊາວຍິວ" (ໂຢຮັນ 4:22). ແນ່ນອນວ່າ ມັນຍັງມີຄວາມແຕກຕ່າງລະຫວ່າງຊາວຍິວ ແລະ ຄົນຕ່າງຊາດກ່ຽວກັບສະຖານະພາບທາງວິນຍານຂອງພວກເຂົາ.

ມັດທາຍ 15:22-28 ເປັນຂໍ້ຄວາມທີ່ໜ້າສົນໃຈຫຼາຍ. ຍິງຊາວການາອານ (ຄົນຕ່າງຊາດ) ມາຫາພຣະເຢຊູຄຣິດ ແລະ ຮ້ອງອອກວ່າ, "ພຣະອົງເຈົ້າຜູ້ເປັນບຸດດາວິດເອີຍ ຂໍໂຜດເມດຕາຂ້ານ້ອຍແດ່ທ້ອນ ຜີມານຮ້າຍສິງລູກສາວຂອງຂ້ານ້ອຍ ແລະມີຄວາມທຸກທໍລະມານຫລາຍຍ້ອນມັນບັງຄັບ." (ຂໍ້ 22). ຜູ້ຍິງຄົນນີ້ຮູ້ວ່າ ພຣະອົງເປັນພຣະຜູ້ເປັນເຈົ້າ ແລະ ໄດ້ອ້ອນວອນຂໍຄວາມຊ່ວຍເຫຼືອຢ່າງສິ້ນຫວັງ. ພຣະຜູ້ເປັນເຈົ້າຕອບຍິງຄົນນີ້ແນວໃດ? "ແຕ່ພຣະອົງບໍ່ໄດ້ກ່າວຈັກຄຳແກ່ນາງເລີຍ" (ຂໍ້ 23). ເປັນຫຍັງພຣະອົງຈຶ່ງເຮັດກັບຜູ້ຍິງຄົນນີ້ແບບບໍ່ສົນໃຈ? ແລ້ວພວກສາວົກກໍໄດ້ອ້ອນວອນໃຫ້ພຣະອົງສົ່ງນາງໄປ. "ແຕ່ພຣະອົງກໍຕອບວ່າ, ເຮົາຖືກໃຊ້ມາຫາຝູງແກະທີ່ເສຍໄປ ໃນຊາດອິດສະຣາເອນເທົ່ານັ້ນ" (ຂໍ້ທີ 24).

ຄຳເວົ້ານີ້ມີຄວາມສຳຄັນຫຼາຍ. ພຣະເຢຊູຄຣິດໄດ້ກ່າວຢ່າງແຈ່ມແຈ້ງວ່າ ພຣະອົງບໍ່ໄດ້ມາຮັບໃຊ້ຄົນຕ່າງຊາດ - ມາສະເພາະຄົນຍິວເທົ່ານັ້ນ! ແຕ່ແມ່ຍິງຄົນຕ່າງຊາດນີ້ໄດ້ອົດທົນຮ້ອງຂໍຄວາມຊ່ວຍເຫຼືອ. ນາງໄດ້ຂາບໄຫວ້ພຣະອົງ ແລະ ອ້ອນວອນຕໍ່ໄປວ່າ, "ພຣະຜູ້ເປັນເຈົ້າ, ຈົ່ງຊ່ວຍຂ້ານ້ອຍແດ່ທ້ອນ" (ຂໍ້ທີ 25). ແນ່ນອນພຣະເຈົ້າຈະຍອມຮັບການຮ້ອງຂໍຂອງຜູ້ຍິງທຸກຍາກຄົນນີ້ສຳລັບຄວາມເມດຕາ! "ແຕ່ພຣະອົງຕອບວ່າ ບໍ່ເປັນການສົມຄວນທີ່ຈະເອົາອາຫານຂອງລູກໂຍນໃຫ້ໝາ" (ຂໍ້ທີ 26). ພຣະຜູ້ເປັນເຈົ້າຕອບວ່າ ມັນບໍ່ຖືກຕ້ອງ ຫຼື ດີທີ່ຈະເອົາພຣະພອນ (ເຂົ້າຈີ່) ຂອງອິດສະຣາເອນໃຫ້ແກ່ຄົນຕ່າງຊາດ (ຫມາ). ດັ່ງນັ້ນ ພຣະອົງຈຶ່ງປະຕິເສດຄຳຂໍຂອງນາງອີກ ແລະ ເອີ້ນນາງວ່າ ໝາ! ແຕ່ຍິງຄົນນີ້ບໍ່ໄດ້ຍອມແພ້! "ແລະນາງໄດ້ກ່າວຕໍ່ວ່າ, ຈິງຢູ່ພຣະອົງເຈົ້າເອີຍ ແມ່ນແຕ່ໝາກໍຍັງໄດ້ກິນເສດອາຫານ ທີ່ຕົກຈາກໂຕະນາຍຂອງມັນ" (ຂໍ້ທີ 27). ຜູ້ຍິງຕ່າງຊາດຄົນນີ້ໄດ້ປະກາດຄວາມເຊື່ອໃນພຣະຄຳຂອງພຣະຜູ້ເປັນເຈົ້າໂດຍກ່າວວ່າ, "ຈິງຢູ່ພຣະອົງເຈົ້າເອີຍ." ນາງຍອມຮັບວ່າ, ໃນຖານະເປັນຄົນຕ່າງຊາດ, ນາງເປັນຫມາ ແລະ ອິດສະຣາເອນເປັນນາຍ. ການອ້ອນວອນຂອງນາງຄືຂໍໃຫ້ນາງຈະໄດ້ຮັບເສດອາຫານສ່ວນນ້ອຍໆ (ພຣະພອນ) ຈາກໂຕະຂອງອິດສະຣາເອນ.

ໃນຕອນທຳອິດ, ພຣະເຈົ້າບໍ່ໄດ້ຕອບຍິງຕ່າງຊາດນີ້. ຫຼັງຈາກນັ້ນ, ພຣະອົງໄດ້ກ່າວເວົ້າວ່າ ພຣະອົງຖືກສົ່ງມາຮັບໃຊ້ຊາດອິດສະຣາເອນເທົ່ານັ້ນ, ບໍ່ແມ່ນຄົນຕ່າງຊາດເຊັ່ນຜູ້ຍິງຄົນນີ້. ໃນຄຳຮ້ອງຂໍເທື່ອທີສາມ, ພຣະອົງກ່າວຕອບວ່າ ມັນບໍ່ເຫມາະສົມທີ່ຈະໃຫ້ພຣະພອນຂອງອິດສະຣາເອນແກ່ຄົນຕ່າງຊາດ. ແຕ່ຫຼັງຈາກທີ່ຜູ້ຍິງຄົນນີ້ຍອມຮັບວ່າ ຕົນເອງເປັນເໝືອນຫມາ ຫຼືຄົນຄົນຕ່າງຊາດ ແລະ ຍອມຮັບວ່າ ອິດສະຣາເອນ ເປັນເໝືອນນາຍ. ການຕອບສະຫນອງຂອງພຣະເຈົ້າປ່ຽນທັນທີ. ພຣະອົງຊົງຍົກຍ້ອງຜູ້ຍິງຄົນນີ້ເລື່ອງຄວາມເຊື່ອຂອງນາງ (ການເຊື່ອໃນພຣະຄຳຂອງພຣະເຈົ້າທີ່ເວົ້າເຖິງອິດສະຣາເອນ ແລະ ຄົນຕ່າງຊາດ). ຫຼັງຈາກນັ້ນ, ພຣະເຈົ້າກໍໄດ້ປິ່ນປົວລູກສາວຂອງນາງ (ຂໍ້ທີ 28).

ອີກເທື່ອໜຶ່ງ, ພວກເຮົາເຫັນວ່າ ພຣະອົງປະຕິເສດການຮ້ອງຂໍຂອງນາງຈົນກວ່ານາງຍອມຮັບວ່າ ອິດສະຣາເອນແມ່ນຊາດທີ່ມີຕຳແໜ່ງພິເສດ. ເຊັ່ນດຽວກັນໃນພຣະຄຳພີເດີມ, ຄົນຕ່າງຊາດຈະສາມາດຮັບພຣະພອນໄດ້ໂດຍຜ່ານຊົນຊາດອິດສະຣາເອນເທົ່ານັ້ນ.

ອີກບ່ອນໜຶ່ງທີ່ມີບັນທຶກເລື່ອງຍິງຄົນນີ້ກັບອົງພຣະຜູ້ເປັນເຈົ້າແມ່ນຢູ່ໃນມາຣະໂກບົດທີເຈັດ. ບັດນີ້, ພວກເຮົາໄດ້ອ້າງເຖິງຂໍ້ທີ 27 ຈາກເລື່ອງນີ້: "ແຕ່ພຣະເຢຊູຄຣິດຕອບນາງວ່າ, ໃຫ້ເດັກນ້ອຍທັງຫຼາຍຂອງເຮົາກິນອີ່ມກ່ອນ ບໍ່ເປັນການສົມຄວນທີ່ຈະໂຍນອາຫານລູກໃຫ້ໝາ." ເປັນຫຍັງພຣະເຢຊູຄຣິດຈຶ່ງສັ່ງອັກຄະສາວົກຂອງພຣະອົງບໍ່ໃຫ້ໄປໃນທາງຄົນຕ່າງຊາດ? ເປັນຫຍັງພຣະອົງຈຶ່ງປະຕິເສດທີ່ຈະປະຕິບັດຕໍ່ຜູ້ຍິງການາອານເຖິງສາມເທື່ອ? ພຣະອົງບໍ່ມັກຄົນຕ່າງຊາດບໍ? ພຣະອົງບໍ່ ເປັນຫ່ວງ ແລະ ມີຄວາມຮັກຕໍ່ຄົນຕ່າງຊາດບໍ? ແນ່ນອນ, ບໍ່ແມ່ນ! ພຣະອົງພຽງແຕ່ປະຕິບັດຕາມແຜນການທີ່ຊົງເປີດເຜີຍໃນພຣະຄຳພີເດີມ. ທຳອິດ, ອິດສະຣາເອນຕ້ອງໄດ້ຮັບການປົກປ້ອງ ແລະ ສ້າງຂຶ້ນໃນອານາຈັກຂອງພຣະອົງ. ຫຼັງຈາກນັ້ນ, ຄວາມລອດພົ້ນຈະໄຫຼໄປສູ່ຄົນຕ່າງຊາດໂດຍຜ່ານຊົນຊາດອິດສະຣາເອນ. ໃຫ້ເດັກນ້ອຍທັງຫຼາຍຂອງເຮົາກິນອີ່ມກ່ອນ!

ຫລາຍຄົນເຊື່ອວ່າ ພຣະເຢຊູຄຣິດ, ໃນຂະນະທີ່ຢູ່ໃນໂລກ, ໄດ້ປະຕິບັດທຸກຄົນທີ່ມາຫາພຣະອົງ ທັງຊາວຢິວ ແລະ ຄົນຕ່າງຊາດ. ພວກເຮົາໄດ້ເຫັນວ່າ ອັນນີ້ບໍ່ແມ່ນຄວາມຈິງ. ອັນນີ້ເປັນພຽງເຫດການດຽວທີ່ມີບັນທຶກເລື່ອງການປະຕິບັດຂອງພຣະອົງກັບຄົນຕ່າງຊາດ, ໃນຂະນະທີ່ພຣະອົງຢູ່ເທິງແຜ່ນດິນໂລກ, ຊຶ່ງພົບເຫັນໃນພຣະທຳລູກາບົດທີເຈັດ. ມີນາຍທະຫານຄົນຕ່າງຊາດຜູ້ໜຶ່ງ ເພິ່ນມີຄົນຮັບໃຊ້ຜູ້ໜຶ່ງທີ່ເພິ່ນຮັກຫລາຍ ລາວໄດ້ເຈັບປ່ວຍໜັກ ແລະ ໃກ້ຈະຕາຍ (ຂໍ້ 2). ນາຍທະຫານຄົນນີ້ຮູ້ວ່າ ໃນຖານະເປັນຄົນຕ່າງຊາດ, ບໍ່ສົມຄວນທີ່ຈະຂໍຮ້ອງຄວາມຊ່ວຍເຫຼືອຈາກພຣະຜູ້ເປັນເຈົ້າດ້ວຍຕົນເອງ. ດັ່ງນັ້ນ, ເພິ່ນຈຶ່ງໄດ້ໃຊ້ "ພວກເຖົ້າແກ່ບາງຄົນຂອງຊາວຢິວໄປອ້ອນວອນຂໍໃຫ້ພຣະອົງມາໂຜດຮັກສາຄົນຮັບໃຊ້ຂອງເພິ່ນ" (ຂໍ້ທີ 3). ຊາວຢິວໄດ້ເຂົ້າມາຫາພຣະເຢຊູຄຣິດເຈົ້າ ແລ້ວກໍອ້ອນວອນຂໍພຣະອົງດ້ວຍຄວາມຕັ້ງໃຈວ່າ ນາຍທະຫານຜູ້ນີ້ສົມຄວນຈະໄດ້ຮັບຄວາມຊ່ວຍເຫລືອຈາກພຣະອົງ. ຄົນຕ່າງຊາດຈະສົມຄວນໄດ້ຮັບພຣະພອນຈາກພຣະຜູ້ເປັນເຈົ້າໄດ້ແນວໃດ? ຂໍ້ທີຫ້າໃຫ້ເຫດຜົນວ່າ: "ເພາະເພິ່ນຮັກປະເທດຊາດຂອງພວກເຮົາ ແລະເພິ່ນກໍໄດ້ສ້າງທຳມະສາລາໃຫ້ພວກເຮົາດ້ວຍ." ແລ້ວພຣະເຢຊູກໍໄດ້ໄປກັບພວກເຂົາ ແລະ ຮັກສາຄົນຮັບໃຊ້ນັ້ນ (ຂໍ້ 6-10). ເໝືອນກັບຜູ້ຍິງຊາວການາອານ, ພຣະຜູ້ເປັນເຈົ້າຊົງປະຕິບັດຄົນຕ່າງຊາດຜູ້ນີ້ ເມື່ອລາວຍອມຮັບຮູ້ຕຳແໜ່ງອັນພິເສດຂອງຊົນຊາດອິດສະຣາເອນ ແລະ ຕຳແໜ່ງອັນຕ່ຳຕ້ອຍຂອງຄົນຕ່າງຊາດ.

ຮູບ

ທີ່ມາ: https://filedn.com/lD0GfuMvTstXgqaJfpLL87S/sweet_images/jpg/42/42_Lk_07_03_RG.jpg - ໃຊ້ເພື່ອເປັນຕົວຢ່າງຂອງພຣະທຳລູກາ 7:3 ເທົ່ານັ້ນ.

ຫຼັກຖານນີ້ແມ່ນຊັດເຈນ ແລະ ມີຫຼາຍທີ່ສະແດງໃຫ້ເຫັນວ່າ ຊາວຢິວ ແລະ ຄົນຕ່າງຊາດບໍ່ເທົ່າທຽມກັນໃນສາຍພຣະເນດຂອງພຣະເຈົ້າ ໃນຊ່ວງເວລາທີ່ພຣະເຢຊູຄຣິດໄດ້ປະຕິບັດຮັບໃຊ້ຢູ່ເທິງແຜ່ນດິນໂລກ. ອັກຄະສາວົກໂປໂລ, ຢືນຢັນເລື່ອງນີ້ວ່າ: "ບັດນີ້ ເຮົາຂໍບອກພວກເຈົ້າວ່າ ພຣະຄຣິດໄດ້ເກີດເປັນຜູ້ຮັບໃຊ້ຊາວຢິວ ເພື່ອເຮັດໃຫ້ພຣະສັນຍາທີ່ມີໄວ້ກັບບັນພະບຸລຸດນັ້ນກາຍເປັນຈິງ" (ໂຣມ 15:8). ພຣະເຢຊູຄຣິດໄດ້ມາເພື່ອຮັບໃຊ້ຝູງແກະທີ່ເສຍໄປ ໃນເຊື້ອສາຍຂອງຊາດອິດສະຣາເອນ (ການຮັບພິທີຕັດ), ບໍ່ແມ່ນເພື່ອຄົນຕ່າງຊາດ. ການຮັບຮູ້ (ຄວາມເຊື່ອ) ນີ້ແມ່ນສຳຄັນໃນການສ້າງຄວາມເຂົ້າໃຈທີ່ຖືກຕ້ອງໃນພຣະທຳມັດທາຍ, ມາຣະໂກ, ລູກາ ແລະ ໂຢຮັນ.

## ຂ່າວປະເສີດເລື່ອງລາຊະອານາຈັກ

ຂ່າວປະເສີດອັນໃດທີ່ໄດ້ມີການປະກາດໃນເວລາທີ່ຂຽນພຣະທຳມັດທາຍ, ມາລະໂກ, ລູກາ ແລະ ໂຢຮັນ? ອັກຄະສາວົກສິບສອງຄົນໄດ້ປະກາດຂ່າວປະເສີດອັນດຽວກັນກັບທີ່ເຮົາກຳລັງປະກາດໃນທຸກມື້ນີ້ບໍ?

ພວກເຮົາໄດ້ກ່າວແລ້ວວ່າ, ຕາມມັດທາຍບົດທີສິບ, ພຣະເຢຊູຄຣິດໄດ້ເລືອກອັກຄະສາວົກສິບສອງຄົນ ແລະ ສົ່ງພວກເຂົາອອກໄປເພື່ອປະກາດຂ່າວປະເສີດ (ຂໍ້ 5-7). ພວກເຂົາໄດ້ອອກໄປ ແລະ ປະກາດຄວາມລອດພົ້ນໂດຍຄວາມເຊື່ອຜ່ານການຕາຍຂອງພຣະເຢຊູຄຣິດບໍ? "ຕັ້ງແຕ່ນັ້ນມາ ພຣະເຢຊູເຈົ້າກໍເລີ່ມອະທິບາຍໃຫ້ພວກສາວົກຟັງ ໂດຍກ່າວວ່າ, ເຮົາຈຳເປັນຕ້ອງໄປນະຄອນເຢຣູຊາເລັມ ແລະ ຕ້ອງຮັບຄວາມທົນທຸກທໍລະມານຢ່າງໜັກຈາກພວກເຖົ້າແກ່ ພວກຫົວໜ້າປະໂຣຫິດ ແລະພວກທຳມະຈານ, ເຮົາຈະຖືກຂ້າແຕ່ໃນວັນຖ້ວນສາມເຮົາຈະເປັນຄືນມາຈາກຕາຍສູ່ຊີວິດ" (ມັດທາຍ 16:21). ພວກສາວົກຖືກສົ່ງອອກໄປປະກາດໃນບົດທີສິບ, ແຕ່ພຣະເຈົ້າບໍ່ໄດ້ບອກພວກເຂົາກ່ຽວກັບຄວາມຕາຍຂອງພຣະອົງທີ່ຈະມາເຖິງ ແລະ ການຟື້ນຄືນຊີວິດຈົນເຖິງບົດທີສິບຫົກ! ພວກເຂົາບໍ່ສາມາດປະກາດຄວາມລອດພົ້ນໂດຍຜ່ານໄມ້ກາງແຂນໃນບົດທີສິບໄດ້! ແລະ ພວກເຂົາຕອບແນວໃດຫຼັງຈາກໄດ້ຍິນວ່າພຣະອົງຈະຕາຍ? "ດັ່ງນັ້ນ ເປໂຕຈຶ່ງພາພຣະອົງຫລີກໄປຕ່າງຫາກ ແລະເລີ່ມຕຳໜິຫ້າມພຣະອົງວ່າ, ພຣະອົງເຈົ້າເອີຍ ຂໍພຣະອົງເຈົ້າຢ່າເປັນດັ່ງນັ້ນເລີຍ ເຫດການຢ່າງນີ້ຈະບໍ່ເກີດຂຶ້ນກັບພຣະອົງຈັກເທື່ອ" (ຂໍ້ 22). ເປໂຕຫວັງຈະປົກປ້ອງພຣະເຢຊູຄຣິດຈາກການຕາຍເທິງໄມ້ກາງແຂນ! ຖ້າເປໂຕໄດ້ຮູ້ຈັກຂ່າວປະເສີດທີ່ພວກເຮົາປ່າວປະກາດໃນມື້ນີ້, ລາວຈະກົ້ມຂາບລົງ ແລະ ນະມັດສະການພຣະຜູ້ເປັນເຈົ້າດ້ວຍຂອບພຣະຄຸນຢ່າງເລິກເຊິ່ງສຳລັບການຕາຍເທິງໄມ້ກາງແຂນຂອງພຣະເຢຊູຄຣິດ. ສະນັ້ນ ເປໂຕໄດ້ປະກາດຫຍັງໃນບົດທີສິບ?

ຮູບ

ທີ່ມາ: https://filedn.com/lD0GfuMvTstXgqaJfpLL87S/sweet_images/jpg/40/40_Mt_16_08_RG.jpg - ໃຊ້ສຳລັບເປັນຕົວຢ່າງຂອງມັດທາຍ 16:22 ເທົ່ານັ້ນ

ໃຫ້ພວກເຮົາມາເບິ່ງໜັງສືຂ່າວປະເສີດລູກາທີ່ເວົ້າກ່ຽວກັບເລື່ອງນີ້. ພວກເຮົາຍັງມີລາຍງານອື່ນອີກເລື່ອງການຊົງເລືອກສາວົກສິບສອງຄົນຄື: "ແລ້ວພວກສາວົກກໍພາກັນອອກເດີນທາງໄປ ຕາມທຸກບ້ານທຸກເມືອງເພື່ອປະກາດຂ່າວປະເສີດ ແລະເຮັດໃຫ້ຄົນເຈັບໄຂ້ໄດ້ປ່ວຍເຊົາພະຍາດ" (ລູກາ 9:6). ຈົ່ງສັງເກດ, ພຣະຄຳພີບອກວ່າ ພວກເຂົາປະກາດຂ່າວປະເສີດຕອນທີ່ຖືກສົ່ງອອກໄປໃນບົດທີເກົ້າ. ຕໍ່ມາ, ໃນບົດສິບແປດ, ພຣະເຢຊູຄຣິດບອກພວກສາວົກວ່າ ພຣະອົງຈະໄປເຢຣູຊາເລັມ, ຈະຖືກປະຫານໂດຍຄຶງທີ່ກາງແຂນ ແລະຟື້ນຄືນຈາກຄວາມຕາຍໃນມື້ທີສາມ (ຂໍ້ທີ 31-33). ຈົ່ງອ່ານຂໍ້ຕໍ່ໄປນີ້ຢ່າງລະມັດລະວັງ "ແຕ່ພວກສາວົກບໍ່ເຂົ້າໃຈຄຳເວົ້າເຫຼົ່ານີ້ຈັກຂໍ້: ຍ້ອນຄວາມໝາຍຂອງຖ້ອຍຄຳເຫຼົ່ານັ້ນ ໄດ້ປິດບັງໄວ້ຈາກພວກເພິ່ນ. ດັ່ງນັ້ນ, ພວກເພິ່ນຈຶ່ງບໍ່ຮູ້ຄວາມໝາຍວ່າ ພຣະເຢຊູເຈົ້າກຳລັງກ່າວເຖິງຫຍັງ" (ຂໍ້ 34). ພວກສາວົກໄດ້ປະກາດຂ່າວປະເສີດໃນບົດທີເກົ້າ, ແຕ່ຕໍ່ມາ, ຕອນທີ່ພວກເຂົາໄດ້ຍິນກ່ຽວກັບການສິ້ນພຣະຊົນ ແລະ ການຟື້ນຄືນຊີວິດຈາກຄວາມຕາຍ. ພວກເຂົາບໍ່ເຂົ້າໃຈສິ່ງທີ່ພຣະເຈົ້າເວົ້າເລີຍ! ມັນຈະເປັນໄປໄດ້ແນວໃດທີ່ພວກເຂົາຈະປະກາດຄວາມລອດພົ້ນໂດຍຜ່ານທາງການສິ້ນພຣະຊົນຂອງພຣະຄຣິດເທິງໄມ້ກາງແຂນ? ພວກເຂົາບໍ່ຮູ້ຫຍັງກ່ຽວກັບເລື່ອງນີ້ ແລະ ໃນເວລາທີ່ພຣະອົງບອກ ພວກເຂົາກໍບໍ່ເຂົ້າໃຈເຊັ່ນກັນ! ຫຼັງຈາກນັ້ນ, ພວກເຂົາໄດ້ປະກາດຫຍັງ?

ພວກເຮົາມັກຈະໄດ້ຍິນຄົນເວົ້າວ່າ ມີຂ່າວປະເສີດອັນດຽວໃນພຣະຄໍາພີ. ພວກເຮົາເຫັນແລ້ວວ່າ ອັນນີ້ບໍ່ແມ່ນຄວາມຈິງ! ມີຂ່າວປະເສີດຫລາຍແບບຢູ່ໃນພຣະຄໍາພີ. ໃນເວລາທີ່ພຣະເຈົ້າໄດ້ກ່າວກັບອັບຣາຮາມວ່າ, "ໂດຍທາງເຈົ້າ, ພຣະເຈົ້າຈະອວຍພອນຊົນຊາດທັງຫລາຍ," ນີ້ແມ່ນຂ່າວປະເສີດ (ຄາລາເຕຍ 3:8). ແຕ່ມັນບໍ່ແມ່ນຂ່າວປະເສີດອັນດຽວກັນກັບທີ່ພວກເຮົາໄດ້ຮັບຄວາມລອດພົ້ນໃນປັດຈຸບັນນີ້! ພຣະນິມິດບົດສິບສີ່ບອກເຖິງເວລາທີ່ "ຂ່າວປະເສີດອັນເປັນນິດ" ຈະຖືກປະກາດ. ຂໍ້ຄວາມໃນຂ່າວປະເສີດນີ້ຄື "ເພາະເຖິງເວລາແລ້ວທີ່ພຣະອົງຈະຕັດສິນມະນຸດສະໂລກ" (ຂໍ້ທີ 6-7). ອັນນັ້ນບໍ່ແມ່ນຂ່າວປະເສີດທີ່ເຮັດໃຫ້ພວກເຮົາໄດ້ຮັບຄວາມລອດພົ້ນ!

ໃນໄລຍະທີ່ພຣະເຢຊູຄຣິດຮັບໃຊ້ຢູ່ເທິງແຜ່ນດິນໂລກ ພວກສາວົກຖືກສົ່ງອອກໄປປະກາດ "ຂ່າວປະເສີດເລື່ອງລາຊະອານາຈັກຂອງພຣະເຈົ້າ" (ມາຣະໂກ 1:14). ອັນນີ້ແມ່ນຂໍ້ຄວາມເຖິງຊາວອິດສະຣາເອນ ເພື່ອໃຫ້ກັບໃຈໃຫມ່ເພາະວ່າອານາຈັກທີ່ໄດ້ສັນຍາໄວ້ແຕ່ດົນນານຂອງພວກເຂົາໃກ້ມາເຖິງແລ້ວ. ມັນແມ່ນຂ່າວປະເສີດທີ່ພຣະເຈົ້າໄດ້ຮຽກຮ້ອງໃຫ້ຊາວອິດສະຣາເອນເຊື່ອໃນຕອນນັ້ນ, ແຕ່ໃນວັນນີ້ ບໍ່ມີໃຜສາມາດຮັບຄວາມລອດພົ້ນໄດ້ໂດຍຄວາມເຊື່ອໃນຂ່າວປະເສີດເລື່ອງລາຊະອານາຈັກ. ຂ່າວປະເສີດຖືກປະກາດໂດຍບໍ່ມີການກ່າວເຖິງການສິ້ນພຣະຊົນ ແລະການຟື້ນຄືນຊີວິດຂອງພຣະເຢຊູຄຣິດ – ເປັນໃຈຄວາມຫຼັກຂອງຂ່າວປະເສີດໃນປັດຈຸບັນນີ້!

ຄໍາສະຫຼຸບກ່ຽວກັບພຣະທໍາມັດທາຍ, ມາຣະໂກ, ລູກາ ແລະ ໂຢຮັນ. ພຣະຄໍາພີທີ່ພວກເຮົາໄດ້ສຶກສາໃນບົດຮຽນທີສິບເກົ້າ ແລະ ຊາວ ຄວນເຮັດໃຫ້ພີ່ນ້ອງຄຣິສຕຽນຫຼາຍຄົນມີແນວຄິດທີ່ຈິງຈັງ. ພວກເຮົາໄດ້ຮຽນຮູ້ວ່າ ໃນພຣະທໍາມັດທາຍ, ມາລະໂກ, ລູກາ, ແລະ ໂຢຮັນ:

1) ປະຊາຊົນຂອງພຣະເຈົ້າຈະຕ້ອງຢູ່ພາຍໃຕ້ກົດບັນຍັດ.

2) ຄວາມຫວັງຂອງພວກສາວົກຄືລາຊະອານາຈັກຂອງພຣະເຈົ້າຈະມາສູ່ໂລກ.

3) ຊົນຊາດອິດສະຣາເອນເປັນຊົນຊາດທີ່ພຣະເຈົ້າຊົງເລືອກ, ທີ່ໄດ້ຮັບການຍົກຍ້ອງຫຼາຍກວ່າຊາດອື່ນໆ.

4) ພວກສາວົກໄດ້ຮັບຄໍາແນະນໍາໃຫ້ປະກາດຂ່າວປະເສີດເລື່ອງລາຊະອານາຈັກ.

ພວກເຂົາໄດ້ປະກາດຂ່າວປະເສີດນີ້ກ່ອນທີ່ຈະຮູ້ວ່າ ພຣະຄຣິດຈະຖືກຄຶງ ແລະ ຟື້ນຄືນອີກເທື່ອຫນຶ່ງ.

ຢ່າງໃດກໍຕາມ, ໃນຍຸກແຫ່ງພຣະຄຸນປັດຈຸບັນນີ້:

1) ພວກເຮົາບໍ່ໄດ້ຢູ່ພາຍໃຕ້ກົດບັນຍັດ, ແຕ່ພາຍໃຕ້ພຣະຄຸນ (ໂຣມ 6: 14).

2) ພຣະເຈົ້າໄດ້ສັນຍາກັບພວກເຮົາເຖິງບ້ານອັນນິລັນດອນໃນສະຫວັນ, ບໍ່ແມ່ນເທິງແຜ່ນດິນໂລກ (ເອເຟໂຊ 2:6; ຟີລິບປອຍ 3:20; 1 ເທສະໂລນິກ 4:13-18).

3) ໃນປັດຈຸບັນນີ້, ອິດສະຣາເອນບໍ່ໄດ້ເປັນທີ່ພໍພຣະໄທເໜືອກວ່າຊາດອື່ນ. ບໍ່ມີຄວາມແຕກຕ່າງກັນລະຫວ່າງຊາວຢິວກັບຄົນຕ່າງຊາດອີກຕໍ່ໄປ ທັງທາງດ້ານຈິດວິນຍານ ຫຼື ພຣະພອນ (ໂຣມ 3:9; 10:12).

4) ພວກເຮົາຕ້ອງປະກາດຂ່າວປະເສີດແຫ່ງພຣະຄຸນທີ່ກ່າວເຖິງການສິ້ນພຣະຊົນຂອງພຣະເຢຊູຄຣິດສຳລັບ

ບາບກຳຂອງພວກເຮົາ ແລະ ການຟື້ນຄືນພຣະຊົນຂອງພຣະອົງໃນມື້ທີສາມ. ຂ່າວປະເສີດເລື່ອງລາຊະອານາຈັກບໍ່ໄດ້ເວົ້າເລື່ອງຄວາມລອດພົ້ນສຳລັບພວກເຮົາໃນປັດຈຸບັນນີ້.

ພຣະທຳມັດທາຍ, ມາຣະໂກ, ລູກາ ແລະ ໂຢຮັນ ເປັນການສືບຕໍ່ຈາກພຣະຄຳພີເດີມ "ເວລາຜ່ານມາ" (ເອເຟໂຊ 2:11). ພວກເຂົາໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບຊ່ວງເວລາຈາກໂມເຊຫາພຣະຄຣິດ (ກົດບັນຍັດຫາພຣະຄຸນ) [ເບິ່ງ ໂຣມ 5:13–16]. ຈຸດທີ່ຕ້ອງໃສ່ໃຈແມ່ນຍັງຢູ່ໃນ "ພຣະສັນຍາ" ທີ່ມອບໃຫ້ອັບຣາຮາມ (ຄາລາເຕຍ 3:17). ຜູ້ທີ່ເຊື່ອໃນພຣະເຈົ້າຍັງໃຊ້ຊີວິດພາຍໃຕ້ "ພຣະບັນຍັດ" (ຄາລາເຕຍ 3: 17).

## ຄຳຖາມທວນຄືນ ບົດຮຽນ 20 ຂ່າວປະເສີດເລື່ອງລາຊະອານາຈັກ—ພາກທີ 2

### ຖືກ ຫຼື ຜິດ

1. ພຣະທຳສີ່ເຫຼັ້ມທຳອິດຂອງພຣະຄຳພີໃຫມ່ແມ່ນສາມາດເຂົ້າໃຈໄດ້ໂດຍບໍ່ຕ້ອງມີຄວາມຮູ້ຈາກພຣະຄຳພີເດີມກໍໄດ້.
2. ໃນພຣະທຳມັດທາຍບົດທີສິບ, ພຣະເຢຊູຄຣິດໄດ້ສົ່ງອັກຄະສາວົກອອກໄປ ເພື່ອປະກາດກັບຄົນຕ່າງຊາດ.
3. ຜູ້ຍິງຄົນຕ່າງຊາດໄດ້ປະຖິ້ມຄວາມຫວັງທັງໝົດ ຫຼັງຈາກທີ່ພຣະຜູ້ເປັນເຈົ້າໄດ້ບອກນາງວ່າ ພຣະອົງຊົງມາເພື່ອຮັບໃຊ້ຊົນຊາດອິດສະຣາເອນເທົ່ານັ້ນ.
4. ໃນເວລາທີ່ພຣະເຢຊູຄຣິດໄດ້ກ່າວວ່າ, "ໃຫ້ເດັກນ້ອຍກິນໃຫ້ອີ່ມກ່ອນ," ພຣະອົງໄດ້ເວົ້າກ່ຽວກັບຊາວອິດສະຣາເອນ.

### ຄຳຖາມແບບປາລະໄນ

5. ໃນໄລຍະທີ່ພຣະເຢຊູຄຣິດຮັບໃຊ້ຢູ່ເທິງແຜ່ນດິນໂລກ:

   ກ) ຄົນຕ່າງຊາດເປັນທີ່ຊອບພຣະໄທຈາກພຣະເຈົ້າ

   ຂ) ບໍ່ມີຄວາມແຕກຕ່າງລະຫວ່າງຊາວຢິວ ແລະ ຄົນຕ່າງຊາດ

   ຄ) ພຣະອົງບໍ່ເຄີຍຮັບໃຊ້ຄົນຕ່າງຊາດ

   ງ) ອິດສະຣາເອນເປັນຊົນຊາດທີ່ພຣະເຈົ້າຊົງປະທານໃຫ້ເຫນືອຊາດອື່ນໆ ທັງຫມົດ

6. ເມື່ອພຣະເຢຊູຄຣິດໄດ້ສົ່ງອັກຄະສາວົກສິບສອງຄົນອອກໄປປະກາດຂ່າວປະເສີດໃນພຣະທຳມັດທາຍບົດທີສິບ:

   ກ) ພວກເຂົາປະກາດຂ່າວປະເສີດແຫ່ງພຣະຄຸນ

   ຂ) ພວກເຂົາຍັງບໍ່ທັນຮູ້ເລື່ອງການສິ້ນພຣະຊົນ ແລະ ການຟື້ນຄືນພຣະຊົນຂອງພຣະຄຣິດ

   ຄ) ພວກເຂົາປະຕິເສດທີ່ຈະເຊື່ອຟັງພຣະອົງ

ງ) ພວກເຂົາປະກາດການເສຍຊີວິດຂອງພຣະເຢຊູຄຣິດສຳລັບບາບກຳຂອງມະນຸດທັງຫມົດ

7. ຂໍ້ໃດຕໍ່ໄປນີ້ຂໍ້ໃດທີ່ເປັນຄວາມຈິງ?

ກ) ມີຂ່າວປະເສີດອັນດຽວຢູ່ໃນພຣະຄຳພີ.

ຂ) ຂ່າວປະເສີດທີ່ພວກເຮົາປະກາດໃນປັດຈຸບັນນີ້ແມ່ນພົບເຫັນໄດ້ຢູ່ໃນພຣະທຳມັດທາຍ, ມາຣະໂກ, ລູກາ ແລະ

ໂຢຮັນ.

ຄ) ມີຫຼາຍຂ່າວປະເສີດຢູ່ໃນພຣະຄຳພີ. ຂ່າວປະເສີດເລື່ອງລາຊະອານາຈັກແມ່ນຕ່າງກັນກັບຂ່າວປະເສີດທີ່ພວກເຮົາປະກາດໃນປັດຈຸບັນນີ້.

ງ) ຂ່າວປະເສີດເລື່ອງລາຊະອານາຈັກບໍ່ສາມາດປະກາດໄດ້ຈົນກ່ວາພຣະເຢຊູຄຣິດໄດ້ສິ້ນພຣະຊົນເທິງໄມ້ກາງແຂນແລ້ວ.

<u>ຕື່ມໃສ່ຊ່ອງຫວ່າງ</u>

8. ມັດທາຍ, ມາລະໂກ, ລູກາ ແລະ ໂຢຮັນສອນວ່າ ພວກສາວົກຕ້ອງຢູ່ພາຍໃຕ້__________.

9. ພຣະທຳສີ່ເຫຼັ້ມທຳອິດໃນພຣະຄຳພີໃໝ່ ແມ່ນຄືກັນກັບພຣະຄຳພີເດີມ, ກຳລັງບອກກ່ຽວກັບ "ເວລາ"

10. ພຣະຄຳພີເດີມ ແລະ ພຣະທຳມັດທາຍ, ມາຣະໂກ, ລູກາ, ແລະ ໂຢຮັນ ສອນວ່າ_________ແມ່ນຊົນຊາດທີ່ພຣະເຈົ້າຊົງເລືອກ.